ASTRA

# Newsletter

NEWSLETTER, ISSUE 5 | ມັງກອນ 2024

# ASTRA ກຳລັງກ້າວໄປຂ້າງໜ້າ!

## ພິທີເປີດ ສູນຄົ້ນຄວ້າ ແລະ ພັດທະນານະວັດຕະກຳ

ພາຍຫຼັງການສ້າງຕັ້ງ ແລະ ດຳເນີນສູນຄົ້ນຄວ້າ ແລະ ພັດທະນານະວັດຕະກຳ ໃນສະຖາບັນການສຶກສາຊັ້ນສູງທັງໃນລາວ ແລະ ໄທ, ການຈັດຕັ້ງສູນໄດ້ຈັດຂຶ້ນຢ່າງເປັນທາງການໃນ **ພິທີເປີດສູນ** ຂອງຄູ່ຮ່ວມມືທັງ 4 ມະຫາວິທະຍາໄລ ທັງໃນລາວ ແລະ ໄທ ເຊັ່ນ: ມະຫາວິທະຍາໄລແຫ່ງຊາດລາວ, ມະຫາວິທະຍາໄລສະຫວັນນະເຂດ, ມະຫາວິທະຍາໄລສົງຂາ ແລະ ມະຫາວິທະຍາໄລຊຽງໃໝ່.

ໃນສີ່ພິທີເປີດສູນໄດ້ແນໃສ່ການແຈ້ງໃຫ້ໄດ້ຮັບຮູ້ກ່ຽວກັບການດຳເນີນງານຂອງສູນຄົ້ນຄວ້າ ແລະ ພັດທະນາໃນສະຖາບັນການສຶກສາຊັ້ນສູງ ແລະ ກ່ຽວກັບທ່າອ່ຽງ ແລະ ໂອກາດທີ່ບໍ່ມຊ້ອນ ສຳລັບການສະໜອງທຶນສາກົນ ໂດຍສຸມໃສ່ຂະຫຍາຍການເຊື່ອມໂຍງກັບເອີຣົບ. ນອກນັ້ນ, ພິທີເປີດສູນກໍໄດ້ເປັນໂອກາດທີ່ເໝາະສົມໃນການລົງນາມຢ່າງເປັນທາງການໃນການດຳເນີນປະຕິບັດຂອງສູນຄົ້ນຄວ້າ ແລະ ພັດທະນາ.

ຜູ້ຕາງໜ້າຈາກຂະແໜງການສຶກສາ, ອຸດສາຫະກຳທ້ອງຖິ່ນ, ຜູ້ມີສ່ວນຮ່ວມ ແລະ ບັນດາຜູ້ໃຫ້ທຶນຈາກຕ່າງປະເທດກໍໄດ້ເຂົ້າຮ່ວມງານເປີດໂຕໃນທັງສອງປະເທດ ແລະ ຍັງປະກອບສ່ວນເພີ່ມທະວີຄວາມສາມາດໃນການດຳເນີນງານ ແລະ ໂອກາດໃນການຮ່ວມມືອີກດ້ວຍ.

ໃນ*ມະຫາວິທະຍາໄລແຫ່ງຊາດລາວ* (NUOL) ໃນປະເທດລາວ, ພິທີເປີດສູນໄດ້ຈັດຂຶ້ນໃນວັນທີ 04 ເມສາ 2023 ແລະ ມີຜູ້ເຂົ້າຮ່ວມຫຼາຍກວ່າ 60 ທ່ານ.




*ພິທີເປີດສູນ ທີ່ມະຫາວິທະຍາໄລແຫ່ງຊາດລາວ (NUOL), ປະເທດລາວ*

*ມະຫາວິທະຍາໄລສະຫວັນນະເຂດ* (SKU) ໃນປະເທດລາວ ກໍໄດ້ຈັດພິທີເປີດສູນ ໃນວັນທີ 3 ເມສາ 2023 ເຊິ່ງໄດ້ດຶງດູດຜູ້ເຂົ້າຮ່ວມປະມານ 50 ທ່ານຈາກສະຖາບັນການສຶກສາ ແລະ ອຸດສາຫະກຳທ້ອງຖິ່ນ.




*ພິທີເປີດສູນ ທີ່ມະຫາວິທະຍາໄລສະຫວັນນະເຂດ (SKU), ປະເທດລາວ*



info@symplexis.eu
www.symplexis.eu

Co-funded by the Erasmus+ Programme of the European Union

This project has been funded with support from the European Commission. The European Commission's support for the production of this document does not constitute an endorsement of the contents, which reflect the views only of the authors, and the Commission cannot be held responsible for any use which may be made of the information contained therein. Agreement number: 618963-EPP-l-2020-1-LA-EPPKA2-CBHE-JP

symplexis

*ມະຫາວິທະຍາໄລສົງຂານະຄະລິນ* (PSU) ໃນປະເທດໄທ ກໍໄດ້ມີການຈັດພິທີເປີດສູນໃນວັນທີ 30 ມີນາ 2023 ທີ່ຄະນະການໂຮງແຮມ ແລະ ການທ່ອງທ່ຽວເຊິ່ງມີຜູ້ເຂົ້າຮ່ວມຫຼາຍກວ່າ 40 ທ່ານ.



*ພິທີເປີດສູນ ທີ່ມະຫາວິທະຍາໄລສົງຂານະຄະລິນ (PSU), ປະເທດໄທ*

ສຸດທ້າຍນີ້, *ມະຫາວິທະຍາໄລຊຽງໃໝ່* (CMU) ໃນປະເທດໄທ ກໍໄດ້ຈັດພິທີເປີດສູນໃນວັນທີ 31 ມີນາ 2023 ເຊິ່ງມີຕົວແທນ ແລະ ຜູ້ເຂົ້າຮ່ວມ 50 ກວ່າທ່ານ.




*ພິທີເປີດສູນ ທີ່ມະຫາວິທະຍາໄລຊຽງໃໝ່ (CMU), ປະເທດໄທ*

## ກອງປະຊຸມຮ່ວມກ່ຽວກັບການຮ່ວມມືພາກພື້ນໃນການສະໜອງທຶນຂອງສະຖາບັນ

ກອງປະຊຸມຮ່ວມກັນລະຫວ່າງ 4 ມະຫາວິທະຍາໄລໃນອາຊີ (NUOL, SKU, PSU, CMU) ໄດ້ຈັດຂຶ້ນໃນວັນທີ 7 ແລະ 8 ກັນຍາ 2023 ທີ່ຫຼວງພະບາງ, ສ.ປ.ປ ລາວ ເຊິ່ງເປັນເຈົ້າພາບໂດຍ ມຊ.(NUOL) ກອງປະຊຸມໃນຄັ້ງນີ້ ໄດ້ເນັ້ນເຖິງຄຸນຄ່າທີ່ເພີ່ມຂຶ້ນຂອງການຮ່ວມມືໃນພາກພື້ນ ແລະ ລະຫວ່າງຊາດ ໃນການສະແຫວງຫາທຶນ ໃນຂົງເຂດຂອງ ICT ແລະ ວິທະຍາສາດສັງຄົມ ທີ່ຢູ່ໃນສາຂາການຮຽນຂອງມະຫາວິທະຍາໄລ. ເຊິ່ງມັນໄດ້ເປັນການຮັບຮອງ ແລະ ຢືນຢັນສໍາລັບການຮ່ວມມືຢ່າງຕໍ່ເນື່ອງ ແລະ ການແລກປ່ຽນຄວາມຮູ້ລະຫວ່າງ 4 ສູນການຄົ້ນຄວ້າ ແລະ ພັດທະນາ ທີ່ໄດ້ສ້າງຕັ້ງຂຶ້ນໃນບໍ່ດົນມານີ້.




ໃນລະຫວ່າງກອງປະຊຸມ, ຜູ້ເຂົ້າຮ່ວມຈາກ 4 ມະຫາວິທະຍາໄລໄດ້ເຮັດວຽກຮ່ວມກັນ ແລະ ແລກປ່ຽນກ່ຽວກັບການຮ່ວມມື ແລະ ໂອກາດດ້ານການສະໜອງທຶນ ໄປຈົນເຖິງການຍົກກໍລະນີສຶກສາ ແລະ ສົນທະນາກ່ຽວກັບການຈັດຕັ້ງປະຕິບັດ ແລະ ຖອດຖອນບົດຮຽນ. ສິ່ງສໍາຄັນທີ່ສຸດ, ກອງປະຊຸມໄດ້ສົ່ງຜົນໃຫ້ເກີດແນວຄວາມຄິດຂອງສອງໂຄງການທີ່ຈະຖືກຄົ້ນຄວ້າ ແລະ ຂຽນສະເໜີເພື່ອຂໍທຶນ, ໂດຍສະເພາະຈະສຸມໃສ່ກ່ຽວກັບການທ່ອງທ່ຽວ.

# ການຕິດຕາມຢ້ຽມຢາມ

ນັບຕັ້ງແຕ່ສູນຄົ້ນຄວ້າ ແລະ ພັດທະນາ ໄດ້ຈັດຕັ້ງປະຕິບັດຂຶ້ນບົນພື້ນຖານທີ່ດີກວ່າຂອງປີ 2023, ສິ່ງສຳຄັນໃນການຍົກລະດັບການບໍລິການແມ່ນການເປັນ ຄູເຝິກສອນ/ໃຫ້ຄຳແນະນຳຈາກຄູ່ຮ່ວມມືເອີຣົບທັງທາງອອນລາຍ ແລະ ເຊິ່ງໜ້າ. ໃນສະພາບການດັ່ງກ່າວ, ຄູ່ຮ່ວມມືເອີຣົບຈະເປັນຄູເຝິກສອນ ນຳເອົາຄວາມຊຳນານ ແລະ ເຮັດວຽກຮ່ວມກັນກັບທີມງານຂອງມະຫາໄລທີ່ຈັດຕັ້ງ, ສືບຕໍ່ຊອກຫາໂອກາດດ້ານການສະໜອງທຶນໃໝ່ໆໃນສາຂາ ICT ແລະ ວິທະຍາສາດສັງຄົມ.

ເພື່ອສະໜັບສະໜູນ ແລະ ໃຫ້ຄຳແນະນຳເພີ່ມເຕີມກ່ຽວກັບການຈັດຕັ້ງປະຕິບັດສູນຄົ້ນຄວ້າ ແລະ ພັດທະນາ ການໄປຢ້ຽມຢາມສະຖານທີ່ໄດ້ຈັດຂຶ້ນທີ່ສີ່ມະຫາວິທະຍາໄລ (NUOL, SKU, PSU, CMU) ໃນລະຫວ່າງເດືອນພະຈິກ ແລະ ທັນວາ 2023.




*ການຕິດຕາມຢ້ຽມຢາມສູນຄົ້ນຄວ້າ ແລະ ພັດທະນາຂອງມະຫາວິທະຍາໄລຊຽງໃໝ່ (CMU), ປະເທດໄທ*

ຜູ້ຊ່ຽວຊານຈາກຄູ່ຮ່ວມມືເອີຣົບຂອງໂຄງການ Symplexis, Athens University of Economics & Business, and University of Florence ໄດ້ມີໂອກາດຢ້ຽມຢາມສູນຄົ້ນຄວ້າ ແລະ ພັດທະນາ ທີ່ຫາກໍຈັດຕັ້ງປະຕິບັດໃໝ່ ແລະ ໄດ້ຕິດຕາມການດຳເນີນງານ, ໃຫ້ແນວທາງ ແລະ ຄຳແນະນຳ ເພື່ອສ້າງການດຳເນີນງານທີ່ດີ ແລະ ຍືນຍົງ.

ບັນຫາທີ່ກວມເອົາການຢ້ຽມຢາມເຫຼົ່ານີ້ ລວມມີບູລິມະສິດໂອກາດໃນການສະໜອງທຶນ, ຄວາມລົ້ງເຄີຍໃນການສົ່ງບົດສະເໜີຜ່ານທາງອອນໄລ, ການສ້າງແນວຄວາມຄິດກ່ຽວກັບໂຄງການໃໝ່ໆ, ການຮັບປະກັນການຮ່ວມມື, ໂຄງສ້າງຂອງໂຄງການ, ການສ້າງເປົ້າໝາຍ ແລະ ຜົນໄດ້ຮັບທີ່ຕ້ອງການ, ການຈັດສັນຄວາມຮັບຜິດຊອບ, ການຮ່າງບົດສະເໜີ, ງົບປະມານ ແລະ ອື່ນໆ.

ຍິ່ງໄປກວ່ານັ້ນ, ໃນລະຫວ່າງການຕິດຕາມຢ້ຽມຢາມ ທີມງານຂອງມະຫາວິທະຍາໄລທີ່ມີສ່ວນຮ່ວມໃນການດຳເນີນສູນຄົ້ນຄວ້າ ແລະ




*ການຕິດຕາມຢ້ຽມຢາມສູນຄົ້ນຄວ້າ ແລະ ພັດທະນາຂອງມະຫາວິທະຍາໄລແຫ່ງຊາດລາວ (NUOL), ປະເທດລາວ*

ພັດທະນາ ໄດ້ມີໂອກາດໃນການສົນທະນາ ແລະ ໄດ້ຮັບຄຳຄວາມເຫັນຕໍ່ກັບແນວຄວາມຄິດຂອງໂຄງການໃໝ່ ແລະ ໂອກາດການສະໜອງທຶນທີ່ຈະດຳເນີນໂຄງການ ວຽກງານສຳຄັນທີ່ຈະຕ້ອງປະຕິບັດພາຍໃຕ້ໜ້າທີ່ຂອງສູນ.




*ການຕິດຕາມຢ້ຽມຢາມສູນຄົ້ນຄວ້າ ແລະ ພັດທະນາຂອງມະຫາວິທະຍາໄລສົງຂານະຄະລິນ (PSU), ປະເທດໄທ*

ການຕິດຕາມຢ້ຽມຢາມ ແລະ ການໃຫ້ຄຳປຶກສາທີ່ສູນດັ່ງກ່າວໄດ້ເປີດໂອກາດໃຫ້ສູນໄດ້ນຳສະເໜີ ແລະ ກວດກາແຜນຄວາມຍືນຍົງໃນໄລຍະຍາວອີກດ້ວຍ.




*ການຕິດຕາມຢ້ຽມຢາມສູນຄົ້ນຄວ້າ ແລະ ພັດທະນາຂອງ ມະຫາວິທະຍາໄລສະຫວັນນະເຂດ (SKU), ປະເທດລາວ*

This project has been funded with support from the European Commission. The European Commission's support for the production of this document does not constitute an endorsement of the contents, which reflect the views only of the authors, and the Commission cannot be held responsible for any use which may be made of the information contained therein. Agreement number: 618963-EPP-I-2020-1-LA-EPPKA2-CBHE-JP